ບໍລິສັດ ລາວອາໂກຣເທັກ ມະຫາຊົນ

ເອກະສານລາຍງານການເງິນໂດຍຫຍໍ້ (ທົບທວນຄືນ)

ສຳລັບໄຕມາດ 03 ປີ 2023

ສາລະບານ *ໜ້າ*

ໃບລາຍງານຖານະການເງິນ	1
ໃບລາຍງານຜົນໄດ້ຮັບ	2
ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ	3
ໃບລາຍງານກະແສເງິນສົດ	4
ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນໂດຍຫຍໍ້	5-9

ບໍລິສັດ ລາວ ອາໂກຣເທັກ ມະຫາຊົນ
ໃບລາຍງານຖານະການເງິນ
ສິ້ນສຸດ ວັນທີ 30 ກັນຍາ 2023

	ບົດອະທິບາຍ	ທີ່ບທວນຄືນ 30 ກັນຍາ 2023 ກີບ	ກວດສອບ 31 ທັນວາ 2022 ກີບ
ຊັບສິນ			
ຊັບສິນໝຸນວຽນ			
ເງິນສົດ ແລະ ລາຍການທຽບເທົ່າເງິນສົດ	3	2,003,180,432	4,619,541,579
ໜີ້ຕ້ອງຮັບການຄ້າ ແລະໜີ້ຕ້ອງຮັບອື່ນໆ, ສຸດທິ		9,977,257,224	10,703,012,890
ເຄື່ອງໃນສາງ, ສຸດທິ		872,204,966	664,795,109
ວັດສະດຸສະໜອງ, ສຸດທິ		1,480,040,988	3,029,381,916
ຄ່າເຍື່ອນຊຳລະຕົ້ນທຶນການປູກເບ້ຍປາມເພື່ອຂາຍ		1,115,061,049	1,248,693,549
ຊັບສິນໝຸນວຽນອື່ນໆ		1,706,325,456	1,303,134,447
ລວມຊັບສິນໝຸນວຽນ		**17,154,070,115**	**21,568,559,490**
ຊັບສິນບໍ່ໝຸນວຽນ			
ຊັບສິມບັດຄົງທີ່ ມີຕົວຕົນ, ສຸດທິ	4	18,137,026,753	18,522,121,435
ຄ່າເຍື່ອນລຳຖ້າຕັດຕົ້ນທຶນການປູກຕົ້ນປາມ, ສຸດທິ	5	23,341,357,990	23,522,524,712
ລວມຊັບສິນບໍ່ໝຸນວຽນ		**41,478,384,744**	**42,044,646,147**
ລວມຊັບສິນ		**58,632,454,858**	**63,613,205,637**
ໜີ້ສິນ ແລະ ທຶນເຈົ້າຂອງ			
ໜີ້ສິນ			
ໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ		6,164,765,280	5,136,437,085
ເງິນກູ້ຢືມໄລຍະສັ້ນ	6	1,486,000,000	2,633,416,800
ໜີ້ຕ້ອງສົ່ງຈາກການເຊົ່າຊື້ໝຸນວຽນ		1,119,909,042	975,453,800
ໜີ້ສິນໝຸນວຽນອື່ນໆ		355,054,956	496,422,123
ລວມໜີ້ສິນໝຸນວຽນ		**9,125,729,278**	**9,241,729,808**
ໜີ້ສິນບໍ່ໝຸນວຽນ			
ໜີ້ຕ້ອງສົ່ງຈາກການເຊົ່າຊື້			17,596,119
ລວມໜີ້ສິນບໍ່ໝຸນວຽນ			**17,596,119**
ລວມໜີ້ສິນ		**9,125,729,278**	**9,259,325,927**
ທຶນເຈົ້າຂອງ			
ທຶນຈົດທະບຽນ		50,000,000,000	50,000,000,000
ສ່ວນເພີ່ມຂອງທຶນ		3,269,466,406	3,269,466,406
ກຳໄລສະສົມ			
ຄົງສະສົມຕາມລະບຽບການ		932,158,245	932,158,245
ກຳໄລສະສົມລຳຖ້າແບ່ງປັນ		(4,694,899,070)	152,255,059
ລວມທຶນເຈົ້າຂອງ		**49,506,725,581**	**54,353,879,710**
ລວມໜີ້ສິນ ແລະ ທຶນເຈົ້າຂອງ		**58,632,454,858**	**63,613,205,637**

ທ່ານ ພົງຖານ ພິດຈຳນົງ
ຮອງຜູ້ອຳນວຍການ
ວັນທີ: 08 ພະຈິກ 2023

ທ່ານ ວັນສະເຫຼີມ ສີສຸດຳມັ່ງ
ຫົວໜ້າບັນຊີ - ການເງິນ
ວັນທີ: 08 ພະຈິກ 2023

ບົດອະທິບາຍຊ້ອນທ້າຍ ແຕ່ໜ້າທີ 5 - 9 ແມ່ນເປັນພາກສ່ວນໜຶ່ງຂອງເອກະສານລາຍງານການເງິນ.

ບໍລິສັດ ລາວ ອາໂກຣເທັກ ມະຫາຊົນ
ໃບລາຍງານຜົນໄດ້ຮັບ
ສຳລັບໄລຍະ 3 ເດືອນສິ້ນສຸດ 30 ກັນຍາ 2023

	ບົດອະທິບາຍ	ທົບທວນຄືນ 30 ກັນຍາ 2023 ກີບ	ທົບທວນຄືນ 30 ກັນຍາ 2022 ກີບ
ລາຍຮັບຈາກການຂາຍ ແລະ ການບໍລິການ		8,892,570,441	8,731,590,357
ຕົ້ນທຶນໃນການຂາຍ ແລະ ການບໍລິການ		(6,801,552,001)	(3,972,545,253)
ກຳໄລ ລວມ		**2,091,018,440**	**4,759,045,105**
ລາຍຈ່າຍການຂາຍ ແລະ ບໍລິຫານ		(2,643,965,437)	(1,819,272,202)
ລາຍຮັບອື່ນໆ		562,493,217	919,979,807
ຂາດທຶນ/ກຳໄລ ຈາກອັດຕາແລກປ່ຽນ		(725,110,425)	(124,957,459)
ກຳໄລຈາກການດຳເນີນງານ		**(715,564,205)**	**3,734,795,251**
ລາຍຈ່າຍທາງການເງິນ		(46,090,770)	(88,227,538)
ກຳໄລຈາກການດຳເນີນງານກ່ອນອາກອນກຳໄລ		**(761,654,975)**	**3,646,567,713**
ອາກອນກຳໄລ			
ກຳໄລສຸດທິສຳລັບງວດ		**(761,654,975)**	**3,646,567,713**
ກຳໄລຕໍ່ຮຸ້ນ			
ກຳໄລສຸດທິຕໍ່ຮຸ້ນ	8	(7.62)	36.47

ທ່ານ ພົງຖານ ພິດຈຳນົງ
ຮອງຜູ້ອຳນວຍການ
ວັນທີ: 08 ພະຈິກ 2023

ທ່ານ ວັນສະເຫຼີມ ສີສຸຄຳມັ່ງ
ຫົວໜ້າບັນຊີ - ການເງິນ
ວັນທີ: 08 ພະຈິກ 2023

ບົດອະທິບາຍຊ້ອນທ້າຍ ແຕ່ໜ້າທີ 5 - 9 ແມ່ນເປັນພາກສ່ວນໜຶ່ງຂອງເອກະສານລາຍງານການເງິນ.

ບໍລິສັດ ລາວ ອາໂກຣເທັກ ມະຫາຊົນ

ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ

ສຳລັບໄລຍະ 3 ເດືອນສິ້ນສຸດ 30 ກັນຍາ 2023

	ທຶນຈົດທະບຽນ	ສ່ວນເພີ້ມມູນຄ່າຮຸ້ນ	ກຳໄລສະສົມ		ລວມ
			ຄ້າງສະສົມຕາມ ລະບຽບການ	ກຳໄລສະສົມ ຈໍ່າ ແນ່ງປັນ	
	ກີບ	ກີບ	ກີບ	ກີບ	ກີບ
ຍອດຍົກມາ ໃນວັນທີ 01 ກໍລະກົດ 2023	50,000,000,000	3,269,466,406	932,158,245	(3,933,244,095)	50,268,380,556
ທຶນຈົດທະບຽນ	-	-	-	-	-
ສ່ວນເພີ້ມມູນຄ່າຮຸ້ນ	-	-	-	-	-
ກຳໄລ/ຂາດ ສຸດທິໃນປີ	-	-	-	(761,654,975)	(761,654,975)
ຄ້າງສະສົມຕາມລະບຽບການ	-	-	-	-	-
ຍອດເຫຼືອທ້າຍປີ ວັນທີ 30 ກັນຍາ 2023	50,000,000,000	3,269,466,406	932,158,245	(4,694,899,070)	49,506,725,581

ທ່ານ ພົງຖານ ພິດຈຳນົງ
ຮອງຜູ້ອຳນວຍການ
ວັນທີ: 08 ພະຈິກ 2023

ທ່ານ ວັນສະເຫຼີມ ສີສຸຄຳມັງ
ຫົວໜ້າບັນຊີ - ການເງິນ
ວັນທີ: 08 ພະຈິກ 2023

ບົດອະທິບາຍຊ້ອນທ້າຍ ແຕ່ໜ້າທີ 5 - 9 ແມ່ນເປັນພາກສ່ວນໜຶ່ງຂອງເອກະສານລາຍງານການເງິນ.

ບໍລິສັດ ລາວ ອາໂກຣເທັກ ມະຫາຊົນ

ໃບລາຍງານກະແສເງິນສົດ

ສຳລັບໄລຍະ 3 ເດືອນສິ້ນສຸດ 30 ກັນຍາ 2023

	ບົດອະທິບາຍ	ທົບທວນຄືນ 30 ກັນຍາ 2023 ກີບ	ທົບທວນຄືນ 30 ກັນຍາ 2022 ກີບ
ກຳໄລກ່ອນເສຍອາກອນ		**(761,654,975)**	**3,646,567,713**
ລາຍການປັບປຸງ:			
ຄ່າຫຼຸຍຫ້ຽນ		580,106,571	42,394,459
ຄ່າຕັດຮອນ		236,282,557	230,160,748
ຂາດທຶນຈາກອັດຕາແລກປ່ຽນ		327,837,252	3,775,915
ລາຍຈ່າຍອັດຕາດອກເບ້ຍ		46,090,770	88,227,538
ການປ່ຽນແປງໃນ ທຶນໝຸນວຽນ:			
ໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ		90,118,551	(280,888,469)
ເຄື່ອງໃນສາງ. ສຸດທິ		(260,006,747)	85,930,403
ວັດສະດຸສະໜອງ. ສຸດທິ		81,035,886	(442,046,455)
ເຍື່ອນລໍຖ້າຕັດຕົ້ນທຶນການປູກຕົ້ນປາມ-ເບ້ຍປາມເພື່ອຂາຍ		(10,067,842)	92,828,102
ຊັບສິນໝຸນວຽນອື່ນໆ		(1,072,746,012)	415,398,062
ໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ		(542,994,861)	(156,978,706)
ໜີ້ສິນໝຸນວຽນອື່ນໆ		84,801,871	76,335,601
ໜີ້ຕ້ອງສົ່ງຈາກການເຊົ່າຊື້ໝຸນວຽນ		(105,624,341)	99,421,394
ກະແສເງິນສົດຈາກກິດຈະກຳດຳເນີນງານ		**(1,306,821,320)**	**3,901,126,303**
ດອກເບ້ຍ		(46,090,770)	(88,227,538)
ອາກອນລາຍໄດ້			
ເງິນສົດສຸດທິຈາກກິດຈະກຳການດຳເນີນງານ		**(1,352,912,090)**	**3,812,898,765**
ກະແສເງິນສົດຈາກກິດຈະກຳການລົງທຶນ			
ຊື້ຊັບສິນບັດຄົງທີ່		(187,782,786)	276,915,514
ຈ່າຍຄ່າຕົ້ນທຶນການປູກປາມ		(262,885,527)	(96,311,549)
ເງິນສົດໃຊ້ສຸດທິ ໃນກິດຈະກຳການລົງທຶນ		**(450,668,313)**	**180,603,996**
ກະແສເງິນສົດຈາກກິດຈະກຳປະກອບທຶນ			
ເງິນສົດຮັບຈາກການກູ້ຢືມ	6	3,506,000,000	2,523,300,000
ຈ່າຍເງິນຄືນຈາກການເງິນກູ້ຢືມ	6	(4,020,000,000)	(2,800,000,000)
ຈ່າຍຕົ້ນທຶນຄືນຈາກການເຊົ່າຊື້		(105,624,341)	(75,547,813)
ເງິນສົດໃຊ້ສຸດທິໃນກິດຈະກຳການເງິນ		**(619,624,341)**	**(352,247,813)**
ເພີ່ມຂຶ້ນ/(ຫຼຸດລົງ)ສຸດທິ ຂອງເງິນສົດ ແລະ ລາຍການທຽບເທົ່າເງິນສົດ		**(2,423,204,743)**	**3,641,254,918**
ເງິນສົດ ແລະ ລາຍການທຽບເທົ່າເງິນສົດ ຕົ້ນປີ		4,296,471,763	985,542,977
ກຳໄລ/(ຂາດທຶນ) ຈາກອັດຕາແລກປ່ຽນໃນ		129,913,413	(1,546,803)
ເງິນສົດ ແລະ ລາຍການທຽບເທົ່າເງິນສົດ ທ້າຍງວດ		**2,003,180,432**	**4,625,251,093**
ໜີ້ຕ້ອງສົ່ງຈາກການຊື້ຊັບສິນບັດຄົງທີ່ ມີຕິວຕົນ		1,910,709,070	1,339,239,660

ທ່ານ ຝົງຄຳ ພິດຈຳນົງ
ຮອງຜູ້ອຳນວຍການ
ວັນທີ: 08 ພະຈິກ 2023

ທ່ານ ອັນສະໜຽມ ສີສຸຄຳມົ່ງ
ຫົວໜ້າບັນຊີ - ການເງິນ
ວັນທີ: 08 ພະຈິກ 2023

ບົດອະທິບາຍຊ້ອນທ້າຍ ແຕ່ໜ້າທີ 5 - 9 ແມ່ນເປັນພາກສ່ວນໜຶ່ງຂອງເອກະສານລາຍງານການເງິນ.

ບໍລິສັດ ລາວອາໂກຣເທັກ ມະຫາຊົນ
ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນໂດຍຫຍໍ້ (ທົບທວນຄືນ)
ສຳລັບໄລຍະ 3 ເດືອນ ສິ້ນສຸດ 30 ກັນຍາ 2023

1 ຂໍ້ມູນທົ່ວໄປ.

ບໍລິສັດ ລາວອາໂກຣເທັກ ມະຫາຊົນ (ບໍລິສັດ) ແມ່ນ ບໍລິສັດ ມະຫາຊົນ ທີ່ສ້າງຕັ້ງຂຶ້ນ ໃນສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ("ສປປ ລາວ").

ມີສຳນັກງານຈົດທະບຽນຕັ້ງຢູ່ ບ້ານ: ໜອງຄັນຄູ, ເມືອງ ນາຊາຍທອງ, ນະຄອນຫຼວງວຽງຈັນ.

ບໍລິສັດໄດ້ມີການຈຳໜ່າຍຮຸ້ນສາມັນຢູ່ໃນຕະຫຼາດຫຼັກຊັບລາວຄັ້ງທຳອິດໃນ ວັນທີ 25 ກັນຍາ 2017

ກິດຈະກຳຫຼັກຂອງບໍລິສັດ ແມ່ນອຸດສາຫະກຳນ້ຳມັນປາມເຊິ່ງເລີ່ມຈາກການເພາະປູກເບ້ຍຕົ້ນປາມ (Palm), ປູກຕົ້ນປາມ, ຜະລິດ ແລະ ຈຳໜ່າຍຜະລິດຕະພັນປາມໂດຍບໍລິສັດເອງ, ນອກຈາກນີ້ບໍລິສັດຍັງສະໜອງເບ້ຍຕົ້ນປາມ ໃຫ້ປະຊາຊົນ ສຳລັບການເພາະປູກ ແລະ ເກັບຊື້ຄືນໝາກປາມ.

ນອກຈາກນີ້ ບໍລິສັດ ຍັງໄດ້ນຳເຂົ້າສິນຄ້າສຳເລັດຮູບ ເຊັ່ນນ້ຳມັນປຸງແຕ່ງອາຫານ ແລະ ແປ້ງນົວ ຈາກປະເທດໄທ ເພື່ອຈຳໜ່າຍໃນ ສປປ ລາວ.

ໃນວັນທີ 23 ພຶດສະພາ 2023, ບໍລິສັດໄດ້ມີການເຊັນສັນຍາສຳປະທານກັບລັດຖະບານ ແຫ່ງ ສປປ ລາວ, ເຊັນຕາງໜ້າລັດຖະບານ ແຫ່ງ ສປປ ລາວໂດຍ ກະຊວງແຜນການ ແລະ ການລົງທຶນ ການເຊັນສັນຍາແມ່ນເພື່ອສຳປະທານທີ່ດິນເພື່ອພັດທະນາໂຄງການປູກໄມ້ອຸດສາຫະກຳ (ປະເພດໄມ້ອາກາເຊຍເຊັ່ນ: ໄມ້ກະຖິນນາລົງ, ໄມ້ກະຖິນເທພາ ແລະ ອື່ນໆ) ຢູ່ເຂດເມືອງຕະໂອ້ຍ ແລະ ເມືອງສະໜ້ວຍ ແຂວງສາລະວັນ, ສປປ ລາວ.

ເອກະສານລາຍງານການເງິນສະບັບນີ້ ໄດ້ຮັບການຮັບຮອງໂດຍສະພາບໍລິຫານຂອງບໍລິສັດ ວັນທີ 08 ພະຈິກ 2023,

2 ພື້ນຖານໃນການກະກຽມບົດລາຍງານ

ເອກະສານລາຍງານການເງິນສະບັບນີ້ໄດ້ຖືກສ້າງຂຶ້ນໂດຍອີງຕາມນະໂຍບາຍການບັນຊີ ຂອງບໍລິສັດດັ່ງທີ່ໄດ້ອະທິບາຍໄວ້ໃນລາຍລະອຽດເພີ່ມເຕີມໃນເອກະສານລາຍງານການເງິນປະຈຳປີ ສຳລັບປີສິ້ນສຸດ ວັນທີ 31 ທັນວາ ປີ 2022. ເອກະສານລາຍງານການເງິນຫຼັກເຊັ່ນ: ໃບລາຍງານຖານະການເງິນ, ໃບລາຍງານຜົນໄດ້ຮັບ, ໃບລາຍງານສ່ວນປ່ຽນແປງຂອງທຶນຂອງຕົນເອງ ແລະ ໃບລາຍງານກະແສເງິນສົດ ຖືກນຳສະເໜີໃນຮູບແບບທີ່ສອດຄ່ອງກັບເອກະສານລາຍງານການເງິນປະຈຳປີໂດຍປະຕິບັດຕາມລະບຽບການລາຍງານ ແລະ ການເປີດເຜີຍທີ່ອອກໂດຍສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

ເອກະສານລາຍງານການເງິນສະບັບນີ້ ຄວນອ່ານຄູ່ກັບເອກະສານລາຍງານການເງິນປະຈຳປີ ສຳລັບປີສິ້ນສຸດ 31 ທັນວາ 2022.

2 ພື້ນຖານໃນການກະກຽມບົດລາຍງານ (ຕໍ່)

ໃນການກະກຽມເອກະສານລາຍງານການເງິນ ຮຽກຮ້ອງໃຫ້ຜູ້ບໍລິຫານຕ້ອງໃຊ້ການຄາດຄະເນ ແລະ ຕັ້ງຂໍ້ສົມມຸດ ທີ່ມີຜົນກະທົບຕໍ່ຊັບສິນ ແລະ ໜີ້ສິນທີ່ຖືກລາຍງານ, ການເປີດເຜີຍຊັບສິນ ແລະ ໜີ້ສິນທີ່ອາດເກີດຂຶ້ນ ໃນວັນທີ ຂອງເອກະສານລາຍງານການເງິນ, ລາຍຮັບ ແລະ ລາຍຈ່າຍໃນໄລຍະເວລາທີ່ລາຍງານ, ເຖິງແມ່ນວ່າການຄາດ ຄະເນເຫຼົ່ານີ້ແມ່ນອີງໃສ່ຄວາມຮູ້ຂອງຜູ້ບໍລິຫານກ່ຽວກັບເຫດການ ແລະ ການກະທຳໃນປະຈຸບັນກໍ່ຕາມ, ແຕ່ຜົນ ໄດ້ຮັບຕົວຈິງອາດຈະແຕກຕ່າງຈາກການຄາດຄະເນເຫຼົ່ານັ້ນ.

3 ເງິນສົດ ແລະ ລາຍການທຽບເທົ່າເງິນສົດ

	ທີ່ບທວນຄືນ ສຳລັບໄລຍະ 3 ເດືອນ ສິ້ນສຸດ 30 ກັນຍາ 2023
ເງິນສົດໃນມື	33,805,004
ເງິນຝາກທະນາຄານທີ່ສາມາດຮຽກເກັບໄດ້ໃນເວລາທີ່ຕ້ອງການ	1,969,375,428
ຍອດເຫຼືອທ້າຍງວດ ສຸດທິ ວັນທີ 30 ກັນຍາ 2023 (ທີ່ບທວນຄືນ)	**2,003,180,432**

ເງິນຝາກທະນາຄານ ລວມມີ 3 ສະກຸນເງິນ ແມ່ນມີ ສະກຸນກີບ, ບາດ ແລະ ໂດລາ ໃນບັນຊີເງິນຝາກກະແສລາຍ ວັນກັບທະນາຄານໃນປະເທດ ແລະ ທະນາຄານສາຂາຕ່າງປະເທດ.

4 ຊັບສິນຄົງທີ່ ມີຕົວຕົນ, ສຸດທິ

	ທີ່ບທວນຄືນ ສຳລັບໄລຍະ 3 ເດືອນສິ້ນສຸດ ວັນທີ 30 ກັນຍາ 2023 ກີບ
ຍອດຍົກມາ ສຸດທິ ໃນວັນທີ 01 ກໍລະກົດ 2023 (ທີ່ບທວນຄືນ)	18,529,350,539
ເພີ່ມຂຶ້ນ	812,566,605
ຮັບເຂົ້າ/ຈ່າຍອອກ	(624,783,820)
ຄ່າຫຼ້ຍຫ້ຽນ	(580,106,571)
ຍອດເຫຼືອທ້າຍງວດ ສຸດທິ ວັນທີ 30 ກັນຍາ 2023 (ທີ່ບທວນຄືນ)	**18,137,026,753**

5 ເຍື່ອນລໍຖ້າຕັດຕົ້ນທຶນການປູກປາມ, ສຸດທິ

	ທີ່ບທວນຄືນ ສຳລັບໄລຍະ 3 ເດືອນສິ້ນສຸດ ວັນທີ 30 ກັນຍາ 2023 ກີບ
ຍອດຍົກມາ ສຸດທິ ໃນວັນທີ 01 ກໍລະກົດ 2023 (ທີ່ບທວນຄືນ)	23,314,755,019
ເພີ່ມຂຶ້ນ	347,945,477
ຮັບເຂົ້າ/ຈ່າຍອອກ	(85,059,949)
ຄ່າຫຼຸ້ຍຫ້ຽນ	(236,282,557)
ຍອດເຫຼືອທ້າຍງວດ ສຸດທິ ວັນທີ 30 ກັນຍາ 2023 (ທີ່ບທວນຄືນ)	**23,341,357,990**

6 ເງິນກູ້ຢືມໄລຍະສັ້ນ

	ທີ່ບທວນຄືນ ສຳລັບໄລຍະ 3 ເດືອນສິ້ນສຸດ ວັນທີ 30 ກັນຍາ 2023 ກີບ
ຍອດຍົກມາ ສຸດທິ ໃນວັນທີ 01 ກໍລະກົດ 2023 (ທີ່ບທວນຄືນ)	2,000,000,000
ເພີ່ມຂຶ້ນ	3,506,000,000
ຊຳລະຄືນ	(4,020,000,000)
ຍອດເຫຼືອທ້າຍງວດ ສຸດທິ ວັນທີ 30 ກັນຍາ 2023 (ທີ່ບທວນຄືນ)	**1,486,000,000**

ທາງບໍລິສັດໄດ້ມີການເຊັນສັນຍາກູ້ຢືມເງິນໄລຍະສັ້ນກັບທະນາຄານ ໄຊ່ງ່ອນ-ຮ່າໂນ້ຍລາວ ຈຳກັດ (SHB) ໃນ ອັດຕາດອກເບ້ຍ 9,10%ຕໍ່ປີ

7 ອາກອນກຳໄລ

ອີງຕາມກົດໝາຍສ່ວຍສາອາກອນຂອງ ສປປ ລາວ ບໍລິສັດ ມີພັນທະໃນການຊຳລະອາກອນກຳໄລ ໃນຮູບແບບຂອງອາກອນກຳໄລໃນອັດຕາແມ່ນ 20% ຂອງກຳໄລທາງອາກອນ. ນອກຈາກນີ້ ບໍລິສັດທີ່ຈົດທະບຽນໃນຕະຫຼາດຫຼັກຊັບລາວ ເຊິ່ງອີງຕາມລະບຽບຂອງຕະຫຼາດຫຼັກຊັບ ບໍລິສັດ ຈະໄດ້ຮັບສ່ວນຫຼຸດຕື່ນອີກ 5% ຈາກອັດຕາອາກອນກຳໄລປະຈຳປີ ເປັນເວລາ 4 ປີ ນັບຈາກປີທີ່ບໍລິສັດໄດ້ເຂົ້າຕະຫຼາດຫຼັກຊັບ ອີງຕາມກົດໝາຍວ່າດ້ວຍອາກອນຂອງ ສປປ ລາວ. ອັດຕາດັ່ງກ່າວແມ່ນໃຊ້ໄດ້ຈົນເຖິງວັນທີ 31 ທັນວາ 2021 ແລະ ອັດຕາ 20% ແມ່ນເລີ່ມນຳໃຊ້ຕັ້ງແຕ່ວັນທີ 01 ມັງກອນ 2022 ເປັນຕົ້ນໄປ.

ລະບົບອາກອນໃນ ສປປ ລາວ ແມ່ນຂ້ອນຂ້າງໃໝ່ ແລະ ມີອາກອນທີ່ຫຼາກຫຼາຍ ແລະ ມັກມີການດັດປັບກົດໝາຍເລື່ອຍໆ ຊຶ່ງມັນບໍ່ຈະແຈ້ງ. ຂັດແຍ້ງກັນ ແລະ ມີການຕີຄວາມໝາຍທີ່ແຕກຕ່າງກັນກັບທີ່ມີຢູ່ໃນໝ່ວຍງານໄລ່ລຽງອາກອນ ແລະ ຂອບເຂດອຳນາດສານ.ອາກອນອາດມີການທົບທວນ ແລະ ກວດສອບຄືນຈາກເຈົ້າໜ້າທີ່ຜູ້ເຊິ່ງສາມາດປັບໄໝ ແລະ ລ່ວງໂທດ.

ປັດໃຈເຫຼົ່ານີ້ ອາດສ້າງຄວາມສ່ຽງທາງອາກອນໃນ ສປປ ລາວ ທີ່ມີສາລະສຳຄັນກວ່າປະເທດອື່ນໆ. ຜູ້ບໍລິຫານເຊື່ອວ່າໄດ້ຈັດກຽມຢ່າງພຽງພໍສຳລັບໜີ້ຕ້ອງສິ່ງອາກອນ ຕາມການຕີຄວາມຂອງກົດໝາຍສ່ວຍສາອາກອນ. ເຖິງຢ່າງໃດກໍ່ຕາມເຈົ້າໜ້າທີ່ທີ່ກ່ຽວຂ້ອງອາດມີການຕີຄວາມທີ່ແຕກຕ່າງກັນ ແລະ ຜົນກະທົບຂອງຄວາມແຕກຕ່າງດັ່ງກ່າວອາດມີສາລະສຳຄັນ.

8 ກຳໄລຕໍ່ຮຸ້ນ

ພື້ນຖານການຄິດໄລ່ກຳໄລຫຼືຂາດທຶນຕໍ່ຮຸ້ນຄິດໄລ່ຈາກການແບ່ງກຳໄລໃຫ້ຜູ້ຖືຮຸ້ນດ້ວຍວິທີການສະເລ່ຍຂອງຈຳນວນຮຸ້ນສາມັນໃນລະຫວ່າງງວດ.

	ທົບທວນຄືນ ສຳລັບໄລຍະ 3 ເດືອນສິ້ນສຸດ ວັນທີ 30 ກັນຍາ 2023 ກີບ
ກຳໄລ/ຂາດທຶນ, ສຸດທິຂອງຜູ້ຖືຮຸ້ນ (ກີບ)	(761,654,975)
ຈຳນວນຮຸ້ນ ສະເລ່ຍຕາມຮຸ້ນສາມັນ (ຮຸ້ນ)	100,000,000
ກຳໄລຕໍ່ຮຸ້ນ (ກີບ)	(7.62)

9 ພາກສ່ວນທີ່ກ່ຽວຂ້ອງ

ວິສາຫະກິດ ແລະ ບຸກຄົນ ທີ່ກ່ຽວຂ້ອງທາງກົງ ຫຼື ທາງອ້ອມ ຜ່ານໜຶ່ງ ຫຼື ຫຼາຍກຸ່ມ ຄວບຄຸມ ຫຼື ຖືກຄວບຄຸມໂດຍ ບໍລິສັດ ຫຼື ພາຍໃຕ້ການຄວບຄຸມທົ່ວໄປຂອງບໍລິສັດ ລວມທັງບໍລິສັດ ທີ່ເຮັດໜ້າທີ່ຖືຮຸ້ນ ບໍລິສັດ ຍ່ອຍ ແລະ ບໍລິສັດ ທີ່ກ່ຽວຂ້ອງກັບບໍລິສັດຍ່ອຍຖືເປັນບໍລິສັດໃນກຸ່ມດຽວກັນ ບຸກຄົນທີ່ເປັນເຈົ້າຂອງທາງກົງ ຫຼື ທາງອ້ອມ ທີ່ ມີສ່ວນໄດ້ສ່ວນເສຍໃນບໍລິສັດ ແລະ ມີອິດທິພົນຫຼາຍຕໍ່ກັບບໍລິສັດ. ຜູ້ບໍລິຫານຫຼັກລວມມີ ຜູ້ອຳນວຍການ ແລະ ພະນັກງານຂອງບໍລິສັດ ແລະ ສະມາຊິກໃກ້ຊິດໃນຄອບຄົວຂອງບຸກຄົນເຫຼົ່ານີ້ ແລະ ບໍລິສັດໃນກຸ່ມ ກັບບຸກຄົນທີ່ ກ່ຽວຂ້ອງເຫຼົ່ານີ້ແມ່ນຖືເປັນພາກສ່ວນທີ່ກ່ຽວຂ້ອງ.

ໃນການພິຈາລະນາ ຄວາມເປັນໄປໄດ້ໃນສາຍສຳພັນຂອງພາກສ່ວນທີ່ກ່ຽວຂ້ອງແມ່ນພິຈາລະນາເຖິງສາຍສຳພັນ ທີ່ແທ້ຈິງ. ບໍ່ໄດ້ພິຈາລະນາພຽງແຕ່ໃນຮູບແບບຂອງກົດໝາຍເທົ່ານັ້ນ.

10 ເຫດການທີ່ເກີດຂຶ້ນໃນລະຫວ່າງມື້ທີ່ລາຍງານ

ບໍ່ມີເຫດການທີ່ເປັນສາລະສຳຄັນຫຼັງເອກະສານລາຍງານການເງິນ ທີ່ມີຜົນກະທົບທີ່ເປັນສາລະສຳຄັນຕໍ່ຕົວເລກ ໃນຂໍ້ມູນການເງິນ ຂອງບໍລິສັດ.